# ບົດສະເໜີ

# ໂຮງຮຽນທົ່ງນາດ້ານການປູກເຂົ້າ



ໂຄງການກະສິກຳຍືນຍົງ

**VECO**

ເມືອງປາກທາ , ແຂວງບໍ່ແກ້ວ

- ນຳສະເໜີໂດຍ ສ/ຫ ແຈມ
- ໜ້າທີ່ຮັບຜິດຊອບ ອ ສ ບ ຂັ້ນບ້ານ
- ຫົວໜ້າກຸ່ມ ໂຮງຮຽນທົ່ງນາດ້ານການປູກເຂົ້າ ແລະ ການນຳໃຊ້ນ້ຳຊົນລະປະທານ
- ປະຈຳຢູ່ບ້ານ ຫ້ວຍພະ ເມືອງ ປາກທາ,ແຂວງ ບໍ່ແກ້ວ

# ຄວາມໝາຍ ແລະ ຄວາມສຳຄັນ

- ໂຮງຮຽນທີ່ງນາແມ່ນການຮຽນ,ການສອນທີ່ແຕກຕ່າງ ກັບໂຮງຮຽນອື່ນໂດຍບໍ່ຈຳກັດພື້ນທີ່ຮຽນ,ການຮຽນ ແມ່ນຮຽນທິດສະດີໜ້ອຍແຕ່ພາກປະຕິບັດຕົວຈິງຫຼາຍ ຊຶ່ງມີຄວາມສຳຄັນຫຼາຍຕໍ່ຊາວກະສິກອນທີ່ມີອາຊີບໃນ ການເຮັດນາຕາມມີຕາມເກີດໃຫ້ຫັນມານຳໃຊ້ແບບເຕັກ ນິກເຂົ້າມາເພື່ອໃຫ້ເກີດມີຄວາມຍືນຍົງ

# ຈຸດປະສົງຂອງໂຮງຮຽນທົ່ງນາ

- ເພື່ອແກ້ໄຂຊີວິດການເປັນຢູ່ສ້າງເສດຖະກິດຄອບຄົວດີຂື້ນເທື່ອລະກ້າວ
- ເພື່ອຫຼຸດຜ່ອນການຖາງປ່າ-ເຮັດໄຮ່ແບບເລື່ອນລອຍໃຫ້ຫັນມາເຮັດນາແບບຄົງທີ່
- ເພື່ອປຽບທຽບ ແລະ ສຶກສາຜົນຜະລິດເຂົ້າ(ດ້ວຍຝຸ່ນຊີວະພາບ)
- ເພື່ອນຳໃຊ້ເຕັກນິກວິຊາການເຂົ້າໃນການເຮັດນາ

# ເຕັກນິກ ແລະ ວິທີການ

- ການເປີດຮັບສະໝັກນັກຮຽນ: ແມ່ນໄດ້ຄັດເລືອກເອົາຜູ້ທີ່ມີຄວາມສົນໃຈແລະຍອມຮັບຕໍ່ການກຳນົດຂອງໂຮງຮຽນທີ່ງນາວາງອອກ
- ການຕົກກ້າ: ແມ່ນອີງໃສ່ຕາມຄວາມສະດວກຂອງພື້ນທີ່ແລະລະດູການເຮັດນາ(ນຳໃຊ້ກ້າສັກ)
- ການບົວລະບັດຮັກສາ: ແມ່ນປັດໃຈອີກຢ່າງໜຶ່ງທີ່ຂາດບໍ່ໄດ້ເພາະເປັນການສູນເສຍທາດອາຫານຂອງຕົ້ນເຂົ້າ

# ຜົນໄດ້ຮັບ

- ຊາວກະສິກອນຮຽນຮູ້ລະບົບນິເວດວິທະຍາຂອງທົ່ງນາ ໂດຍອາໃສແມງໄມ້ກິນແມງໄມ້
- ຮູ້ເຕັກນິກການເຮັດນາແບບກະເສດສຸມໃຊ້ທຶນໜ້ອຍ,ຜົນຜະລິດ ສູງ,ດິນມີການປັບປຸງດີຂື້ນຈາກ 2,8 - 3,6 ໂຕນ/1ເຮັກຕາ
- ສ້າງວິຊາການຂັ້ນບ້ານຊຶ່ງເປັນຕົວແທນຂອງພະນັກງານຂັ້ນເມືອງ
- ຊາວກະສິກອນມີຄວາມສາມັກຄີພ້ອມໃຈກັນຮຽນແລະ ຖອດຖອນບົດຮຽນກ່ຽວກັບການແກ້ໃຂບັນຫາໃນນາເຂົ້າໄດ້ເກັ່ງ

# ບົດຮຽນທີ່ຖອດຖອນໄດ້

1. ໃນໄຮ່ນາເກີດມີເຫົາຊຽວແກ້ໄຂບັນຫາດ້ວຍການແຫ້ງນ້ຳ1ອາທິດ
2. ໃນນາມີດິນສົມບູນເຂົ້າງາມເຂັ້ມຜິດປົກກະຕິຕົ້ນເຂົ້າເກີດຍຸບຕົວ
3. ລົງແກ້ແມ່ນແຫ້ງນ້ຳປະໄວ້1ອາທິດ
4. ມີຕັກແຕນແລະບົ້ງຮໍາໃບກັດແກ້ແມ່ນນໍາໃຊ້ນ້ຳສະກັດຊີວະພາບ ສູດຂັບໄລ່ແມງໄມ້ສີດພົ່ນຕິດຕໍ່ກັນ 3ວັນລຽນຕິດໃນອັດຕາ 2 ບ່ວງແກງ/ນ້ຳ10 ລິດ
5. ການຄັດເລືອກແນວພັນຜ່ານຈາກນ້ຳເກືອເພື່ອເຮັດໃຫ້ເຂົ້າໄດ້ແນວພັນທີ່ແຂງແຮງແລະສົມບູນສາມາດແຕກໜໍ່ 100 %

# Tanks you

# ຂອບໃຈຫຼາຍໆເດີ.....